ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ເລກທີ: 1425-
ວັນທີ: 31 AUG 2017

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----====000====-----

ຕະຫຼາດຫຼັກຊັບລາວ
LAO SECURITIES EXCHANGE

ເລກທີ 286/ຕລຊລ
ນະຄອນຫຼວງວຽງຈັນ, ວັນທີ 31 AUG 2017

ເຖິງ: ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ເລື່ອງ: ສະເໜີປ່ຽນມື້ກຳນົດການຈ່າຍເງິນປັນຜົນ

- ອີງຕາມ ໜັງສືແຈ້ງການ ວັນພັກທາງລັດຖະການຂອງທະນາຄານແຫ່ງ ສປປ ລາວ ປະຈຳປີ 2017 ສະບັບ ເລກທີ 0045/ສຄຄຊ, ລົງວັນທີ 05 ທັນວາ 2016;
- ອີງຕາມ ການເປີດເຜີຍຂໍ້ມູນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຫົວຂໍ້ "ແຈ້ງມະຕິທີ່ສຳຄັນຂອງ ກອງປະຊຸມສະພາບໍລິຫານ ສະໄໝສາມັນຄັ້ງທີ 3/2017" ໃນວັນທີ 23 ສິງຫາ 2017.

ຕະຫຼາດຫຼັກຊັບລາວ (ຕລຊລ) ຂໍຖືເປັນກຽດຮຽນມາຍັງທ່ານຊາບວ່າ ການກຳນົດວັນຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ຈາກຜົນການດຳເນີນທຸລະກິດປະຈຳ 6 ເດືອນຕົ້ນປີ 2017 ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ກຳນົດຈ່າຍ ໃນວັນທີ 9 ຕຸລາ 2017 (ວັນຈັນ) ແມ່ນບໍ່ສາມາດດຳເນີນການໄດ້ ເນື່ອງຈາກວ່າ ວັນດັ່ງກ່າວແມ່ນ ວັນພັກຊົດເຊີຍວັນ ສ້າງຕັ້ງ ທະນາຄານແຫ່ງ ສປປ ລາວ (ວັນທີ 7 ຕຸລາ 2017, ກົງກັບວັນເສົາ) ເຊິ່ງທົ່ວຂົງເຂດລະບົບທະນາຄານຈະຖືກ ຢຸດດຳເນີນການ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານປ່ຽນມື້ກຳນົດຈ່າຍເງິນປັນຜົນ ຈາກວັນທີ 9 ຕຸລາ 2017 ມາເປັນ **ວັນທີ 10 ຕຸລາ 2017** ເພື່ອເຮັດໃຫ້ການດຳເນີນການຈ່າຍເງິນປັນຜົນດັ່ງກ່າວສາມາດປະຕິບັດໄດ້ຢ່າງເປັນປົກກະຕິ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ,

ຜູ້ອຳນວຍການໃຫຍ່
ຕະຫຼາດຫຼັກຊັບລາວ

ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ
Lao Securities Exchange Co.,Ltd

ວັນຄຳ ວໍຣະວົງ